ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 50/ພນ

ນະຄອນຫຼວງວຽງຈັນ, ວັນທີ 01 ກຸມພາ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການປະກອບສ່ວນຂອງປະຊາຊົນໃນການພັດທະນາບ້ານ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການປະຕິບັດພັນທະ ແລະ ການປະກອບສ່ວນຂອງປະຊາຊົນໃນການພັດທະນາບ້ານ ສະບັບເລກທີ 08/ນຍ, ລົງວັນທີ 24 ມັງກອນ 2017;
- ອີງຕາມ ດໍາລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 575/ນຍ, ລົງວັນທີ 28 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມການປົກຄອງທ້ອງຖິ່ນ ສະບັບເລກທີ 07/ປທ, ລົງວັນທີ 12 ມັງກອນ 2023;

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຄວາມໝາຍ, ລະບຽບຫຼັກການໃນການປະກອບສ່ວນຂອງປະຊາຊົນ ເພື່ອເປັນບ່ອນອີງໃຫ້ບ້ານນໍາໃຊ້ໃນການຈັດຕັ້ງປະຕິບັດ ແນໃສ່ສົ່ງເສີມ, ປຸກລະດົມການປະກອບສ່ວນຂອງປະຊາຊົນ, ເສີມຂະຫຍາຍສິດເປັນເຈົ້າ ແລະ ຫົວຄິດປະດິດສ້າງຂອງບ້ານ ໃນການຂຸດຄົ້ນນໍາໃຊ້ທ່າແຮງ ເພື່ອພັດທະນາບ້ານຂອງຕົນໃຫ້ເປັນຫົວໜ່ວຍພັດທະນາເທື່ອລະກ້າວ.

**ມາດຕາ 2 ຄວາມໝາຍ**

ການປະກອບສ່ວນຂອງປະຊາຊົນໃນການພັດທະນາບ້ານ ໝາຍເຖິງການລະດົມທຶນຈາກປະຊາຊົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດທີ່ຕັ້ງຢູ່ພາຍໃນເຂດປົກຄອງຂອງບ້ານ ດ້ວຍການປະກອບສ່ວນເປັນເງິນ, ວັດຖຸ ຫຼື ແຮງງານ ເຂົ້າໃນເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກໍາ ທີ່ເປັນການພັດທະນາບ້ານ ແລະ ສົມທົບເຂົ້າໃນວຽກງານລວມອັນຈໍາເປັນໃດໜຶ່ງຂອງບ້ານທີ່ຂັ້ນເທິງມອບໝາຍ.

**ມາດຕາ 3 ຫຼັກການ**

ການປະກອບສ່ວນຂອງປະຊາຊົນໃນການພັດທະນາບ້ານ ຕ້ອງຮັບປະກັນຫຼັກການລວມສູນປະຊາທິປະໄຕ, ສະເໝີພາບ, ຍຸຕິທໍາ, ຖືກຕ້ອງຕາມກົດໝາຍ, ເປີດເຜີຍ, ໂປ່ງໃສ ແລະ ກວດສອບໄດ້.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ເງື່ອນໄຂ, ການກຳນົດ ແລະ ການຄັດເລືອກເປົ້າໝາຍການພັດທະນາບ້ານ

**ມາດຕາ 5 ເງື່ອນໄຂກຳນົດເປົ້າໝາຍ**

1. ເປັນວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ໃນຂົງເຂດການເມືອງ-ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປົກປັກຮັກສາຊັບພະຍາກອນທຳມະຊາດ-ສິ່ງແວດລ້ອມ ທີ່ພົວພັນເຖິງການພັດທະນາຂອງບ້ານ ແລະ ສິດຜົນປະໂຫຍດລວມຂອງປະຊາຊົນພາຍໃນບ້ານ;

2. ເປັນວຽກສຸກເສີນບັງເອີນທີ່ຈຳເປັນຕໍ່ການດຳລົງຊີວິດຕົວຈິງຂອງປະຊາຊົນພາຍໃນບ້ານ.

**ມາດຕາ 6 ການສະເໜີ ແລະ ການກຳນົດເປົ້າໝາຍ**

ອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ເປັນຜູ້ສະເໜີເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ເພື່ອພັດທະນາບ້ານ ແລະ ໃຫ້ມີການປະກອບສ່ວນ. ນອກຈາກນີ້ ອົງການປົກຄອງບ້ານ ແລະ ປະຊາຊົນຍັງຕ້ອງມີສ່ວນຮ່ວມໃນການປະກອບສ່ວນຕາມຄຳສັ່ງ ຫຼື ແຈ້ງການຂອງຂັ້ນເທິງໃຫ້ປະຕິບັດ;

ການກຳນົດເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ເພື່ອໃຫ້ມີການປະກອບສ່ວນເຂົ້າໃນການພັດທະນາບ້ານ, ອົງການປົກຄອງບ້ານຕ້ອງກຳແໜ້ນສະພາບຄວາມສຳຄັນ, ຈຳເປັນຕໍ່ການດຳລົງຊີວິດ ແລະ ຜົນປະໂຫຍດລວມຂອງປະຊາຊົນທີ່ຈະໄດ້ຮັບ ໂດຍການຄົ້ນຄວ້າວິເຄາະ, ຈັດລຽງບຸລິມະສິດ, ປຶກສາຫາລືກັນໃນກອງປະຊຸມອົງການປົກຄອງບ້ານໃຫ້ລະອຽດ ກ່ອນນຳສະເໜີຕໍ່ກອງປະຊຸມບ້ານພິຈາລະນາ.

**ມາດຕາ 7 ການຄັດເລືອກເປົ້າໝາຍ**

ການຄັດເລືອກເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ເພື່ອໃຫ້ມີການປະກອບສ່ວນເຂົ້າໃນການພັດທະນາບ້ານ ແມ່ນກອງປະຊຸມບ້ານເປັນຜູ້ພິຈາລະນາຄັດເລືອກ ແລະ ຕົກລົງຮັບຮອງກຳນົດເອົາ.

**ມາດຕາ 8 ລະດັບການປະກອບສ່ວນ**

ການກຳນົດລະດັບການປະກອບສ່ວນຕ້ອງຮັບປະກັນຖືກຕ້ອງຕາມຫຼັກການການປະກອບສ່ວນທີ່ກຳນົດໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ແລະ ສອດຄ່ອງກັບສະພາບເສດຖະກິດ, ລະດັບຊີວິດການເປັນຢູ່, ຄວາມອາດສາມາດຂອງປະຊາຊົນ ບົນພື້ນຖານຄວາມເປັນເອກະພາບເປັນສ່ວນໃຫຍ່ຂອງປະຊາຊົນພາຍໃນບ້ານ.

ສຳລັບຜູ້ທີ່ມີລາຍຮັບຫຼາຍ ຫຼື ຜູ້ມີເງື່ອນໄຂດ້ານເສດຖະກິດກໍ່ສາມາດປະກອບສ່ວນຫຼາຍໄດ້, ສ່ວນຜູ້ທຸກຍາກຫຍຸ້ງຍາກຂາດເຂີນແທ້ກໍຕ້ອງມີການພິຈາລະນາຢ່າງເໝາະສົມ.

## ໝວດທີ 3
## ຂັ້ນຕອນການຈັດຕັ້ງປະຕິບັດການປະກອບສ່ວນ

**ມາດຕາ 9 ຂັ້ນຕອນການຈັດຕັ້ງປະຕິບັດ**

ພາຍຫຼັງທີ່ຄັດເລືອກ ແລະ ກຳນົດເອົາເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ; ການຈັດຕັ້ງປະຕິບັດການປະກອບສ່ວນ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ນາຍບ້ານແຕ່ງຕັ້ງຄະນະຮັບຜິດຊອບວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຕົກລົງຮັບຮອງ ຊຶ່ງປະກອບມີ:

- ນາຍບ້ານ ເປັນຫົວໜ້າ;
- ຮອງນາຍບ້ານ ເປັນຮອງ;
- ຕາງໜ້າຊາວໜຸ່ມບ້ານ ເປັນຄະນະ;
- ຕາງໜ້າສະຫະພັນແມ່ຍິງບ້ານ ເປັນຄະນະ;
- ຕາງໜ້າປະຊາຊົນ 02 ທ່ານ ເປັນຄະນະ;
- ຜູ້ຊົງຄຸນວຸດທິ ຫຼື ພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ ເປັນຄະນະ;

ສຳລັບການປະກອບສ່ວນດ້ວຍການເກັບເປັນເງິນ ຕ້ອງໃຫ້ມີຜູ້ຮັບຜິດຊອບວຽກງານການເງິນບ້ານປະກອບຢູ່ໃນຄະນະຮັບຜິດຊອບ.

2. ປະກາດແຈ້ງການ ໃຫ້ປະຊາຊົນພາຍໃນບ້ານຮັບຊາບ ກ່ຽວກັບລາຍລະອຽດ ຊຶ່ງເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຕົກລົງຮັບຮອງເປັນຕົ້ນ ຄະນະຮັບຜິດຊອບ, ລະດັບການປະກອບສ່ວນ, ໄລຍະເວລາ, ວິທີຈັດຕັ້ງປະຕິບັດ ແລະ ອື່ນໆ ໂດຍການຕິດປະກາດຢູ່ຫ້ອງການບ້ານ, ແຈ້ງປະກາດຜ່ານໂທລະໂຄ່ງຊຸມຊົນຂອງບ້ານ ແລະ ໃຫ້ຫົວໜ້າໜ່ວຍແຈ້ງຕໍ່ສະມາຊິກໜ່ວຍຂອງຕົນ;

3. ສະຫຼຸບລາຍງານການດຳເນີນການຈັດຕັ້ງປະຕິບັດ ຕໍ່ພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນ.

**ມາດຕາ 10 ການຄຸ້ມຄອງການຈັດຕັ້ງປະຕິບັດ**

ຄະນະຮັບຜິດຊອບເປັນເຈົ້າການ ຮັບຜິດຊອບປະສານສົມທົບກັບທຸກພາກສ່ວນ ນຳພາ, ຄຸ້ມຄອງ ແລະ ດຳເນີນການຈັດຕັ້ງການປະຕິບັດວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ ໂດຍຕ້ອງນຳໃຊ້ທຸກການປະກອບສ່ວນໃຫ້ຖືກຕາມເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຕົກລົງຮັບຮອງເທົ່ານັ້ນ.

ສຳລັບການປະກອບສ່ວນດ້ວຍການເກັບເປັນເງິນຕ້ອງປະຕິບັດຢ່າງເຂັ້ມງວດ ຕາມຫຼັກການບັນຊີ ແລະ ກຳນົດການນຳໃຊ້ລະອຽດຕາມຂັ້ນຕອນ ດັ່ງນີ້:

1. ເງິນປະກອບສ່ວນຂອງປະຊາຊົນຕ້ອງມອບເຂົ້າບັນຊີຂອງບ້ານ ຫຼື ເປີດບັນຊີສະເພາະຮັບໃຊ້ເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຮັບຮອງ;

2. ເງິນປະກອບສ່ວນຂອງປະຊາຊົນຕ້ອງຈ່າຍຮັບໃຊ້ສະເພາະເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ທີ່ໄດ້ຮັບຮອງເທົ່ານັ້ນ ແລະ ຈ່າຍຢ່າງເຕັມສ່ວນ ໂດຍບໍ່ໃຫ້ມີການຫັກຄ່າໃດໆໄວ້;

3. ການຈ່າຍເງິນປະກອບສ່ວນຕ້ອງຮັບປະກັນຫຼັກການລະບອບຖືບັນຊີຢ່າງເປີດເຜີຍ, ໂປ່ງໃສ ແລະ ກວດສອບໄດ້;

4. ເງິນປະກອບສ່ວນຂອງປະຊາຊົນຕ້ອງຖືກຈົດບັນທຶກເຂົ້າໃນບັນຊີຂອງແຕ່ລະວຽກ ຫຼື ແຕ່ລະເປົ້າໝາຍ;

5. ການເກັບເງິນທຸກໆເທື່ອຕ້ອງອອກໃບຮັບເງິນໃຫ້ຜູ້ປະກອບສ່ວນ, ສະຫຼຸບບັນຊີປະຈຳວັນ, ປະຈຳອາທິດ, ປະຈຳເດືອນ ແລະ ຈຳແນກໃຫ້ແຈ້ງເປັນແຕ່ລະເປົ້າໝາຍຢ່າງເຂັ້ມງວດ;

6. ຕ້ອງມີສະຫຼຸບລະອຽດການເກັບ ແລະ ການໃຊ້ຈ່າຍເງິນປະກອບສ່ວນຂອງປະຊາຊົນ ສຳລັບແຕ່ລະວຽກ ຫຼື ແຕ່ລະເປົ້າໝາຍ ເພື່ອລາຍງານໃຫ້ປະຊາຊົນໃນກອງປະຊຸມບ້ານ ແລະ ພາກສ່ວນກ່ຽວຂ້ອງຮັບຊາບໃນແຕ່ລະໄລຍະ.

**ມາດຕາ 11 ການຕິດຕາມກວດກາ**

ທຸກໆປະເພດການປະກອບສ່ວນຂອງປະຊາຊົນ ທີ່ເປັນເປົ້າໝາຍວຽກງານ, ແຜນການ, ໂຄງການ ຫຼື ກິດຈະກຳ ເພື່ອພັດທະນາບ້ານແມ່ນຢູ່ພາຍໃຕ້ການຕິດຕາມກວດກາຂອງຄະນະໜ່ວຍພັກ, ອົງການປົກຄອງ

ບ້ານ ແລະ ປະຊາຊົນ; ໃນກໍລະນີມີຄວາມຈຳເປັນ ສາມາດສະເໜີໃຫ້ພາກສ່ວນກ່ຽວຂ້ອງຂອງຂັ້ນເມືອງລົງມາ ຕິດຕາມ, ກວດກາ.

## ໝວດທີ 4
## ນະໂຍບາຍ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 12 ນະໂຍບາຍ**

ອົງການປົກຄອງບ້ານ, ຄະນະຮັບຜິດຊອບ, ພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນ ທີ່ປະຕິບັດ ແລະ ມີສ່ວນຮ່ວມໃນການປະກອບສ່ວນໄດ້ດີ, ມີຄວາມເອົາໃຈໃສ່ ແລະ ເຂັ້ມງວດໃນການຈັດຕັ້ງປະຕິບັດ ຈະໄດ້ຮັບການພິຈາລະນາໃຫ້ໄດ້ຮັບການຍ້ອງຍໍ ຊົມເຊີຍຕາມຄວາມເໝາະສົມ.

**ມາດຕາ 13 ມາດຕະການຕໍ່ຜູ້ລະເມີດ**

ປະຊາຊົນຜູ້ທີ່ມີພຶດຕິກຳ, ເຈດຕະນາບໍ່ປະກອບສ່ວນໃນກິດຈະກຳຕ່າງໆ ຕາມການຕົກລົງຂອງບ້ານຈະຖືກສຶກສາອົບຮົມ, ຕຳນິຕິຕຽນ ຫຼື ຖືກປະຕິບັດມາດຕະການຕາມລະບຽບຂອງບ້ານ.

*ອົງການປົກຄອງບ້ານ, ຄະນະຮັບຜິດຊອບ, ພາກສ່ວນກ່ຽວຂ້ອງ ທີ່ປະຕິບັດບໍ່ເຂັ້ມງວດ ແລະ ລະເມີດຂໍ້*ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ຕຳນິຕິຕຽນ, ຖືກປັບໄໝ, ຕ້ອງໃຊ້ແທນຄືນ ຫຼື ຖືກດຳເນີນຄະດີຕາມລະບຽບການ ແລະ ກົດໝາຍ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 14 ການຈັດຕັ້ງປະຕິບັດ**

1. ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມ, ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;
2. ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ;
3. ພະແນກພາຍໃນ, ຫ້ອງການພາຍໃນ ຕິດຕາມກວດກາການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ອົງການປົກຄອງບ້ານຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການເກັບເງິນປະກອບສ່ວນພັດທະນາບ້ານຂອງປະຊາຊົນ ສະບັບເລກທີ 648/ພນ, ລົງວັນທີ 24 ສິງຫາ 2016.

ລັດຖະມົນຕີ

ປອ. ທອງຈັນ ມະນີໄຊ